## ວິທີການ

# ປູກມອນ ລ້ຽງມ້ອນ

## ພື້ນເມືອງ

ສຣພ

PADETC

ຂຽນ ແລະ ຮຽບຮຽງໂດຍ : ອາຈານ ຄຳພັນ ພັນທະວົງ.

ກວດແກ້ໂດຍ: ອາຈານໄພໄຊ ຈັນທະວົງສາ.

ພິມໂດຍ: ນາງ ສອນມະນີ ພິມລະຫວັນ.

ແຕ້ມໂດຍ: ທ້າວ ອູທອງ.

ປີ 2005

## ຄຳນຳ

ປື້ມຄູ່ມືຫົວນີ້ເປັນຫລັກສູດເພີ່ມເຕີມທົບທວນຄວາມຊົງຈຳຂອງຜູ້ທີ່ເຄີຍປູກມອນລ້ຽງມ້ອນແບບພື້ນເມືອງມາກ່ອນ, ຟື້ນຟູສີໄມ້ລາຍມື ມູນເຊື້ອອັນດີງາມຂອງປະຊາຊົນລາວບັນດາເຜົ່າໃຫ້ຄວາມຮູ້ພື້ນຖານຕໍ່ກັບຜູ້ທີ່ສົນໃຈ ທີ່ບໍ່ເຄີຍລ້ຽງມາກ່ອນ.

ໃນປະຈຸບັນການລ້ຽງມ້ອນພື້ນເມືອງໃນປະເທດລາວແມ່ນຍັງເຫລືອໜ້ອຍເຕັມທີຍ້ອນມີໄໝຕ່າງປະເທດ ເຂົ້າມາຈຳໜ່າຍ ກົງກັນຂ້າມພວກທີ່ຊົມໃຊ້ໄໝຕ່າງປະເທດພັດສົນໃຈເລື່ອງໄໝລາວມາຕັ້ງແຕ່ດົນນານແລ້ວ ເມື່ອເບິ່ງຕົວຈິງແລ້ວ ເຫັນວ່າປະເທດເຮົາຍັງເປັນເຂດພັດທະນາ ດັ່ງນັ້ນ ພວກເຮົາຄວນເອົາໃຈໃສ່ສົ່ງເສີມການປູກມອນລ້ຽງມ້ອນພື້ນເມືອງລາວໃນໝູ່ປະຊາຊົນໃຫ້ກວ້າງຂວາງກວ່າເກົ່າອີກ.

ຄະນະວິຊາການພະແນກພັດທະນາເຕັກນິກ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍຂອງສູນອົບຮົມຮ່ວມພັດທະນາ. ມີສຳນັກງານຕັ້ງຢູ່ບ້ານນາຄຳ ເມືອງສີໂຄດຕະບອງກຳແພງນະຄອນວຽງຈັນເປັນຜູ້ຂອບຮອມ ແລະ ຈັດພິມຫລັກສູດເພື່ອຮັບໃຊ້ການສົ່ງເສີມວຽກງານດັ່ງກ່າວ.

ຫວັງວ່າປື້ມຫລັກສູດເພີ່ມເຕີມຫົວນີ້ຈະເປັນປະໂຫຍດບໍ່ຫລາຍກໍ່ໜ້ອຍແກ່ທ່ານຜູ້ທີ່ສົນໃຈດຳເນີນການປູກມອນລ້ຽງມ້ອນເພື່ອເປັນອາຊີບເສີມ,ຖ້າຫາກມີສິ່ງໃດຂາດຕົກບົກພ່ອງພວກເຮົາຍິນດີຮັບຄຳຕຳນິຕິຊົມຈາກທຸກໆທ່ານ.

ສູນອົບຮົມຮ່ວມພັດທະນາ.

## ສາລະບານ


ບົດທີ. ໜ້າ

ບົດທີ 1: ມ້ອນພື້ນເມືອງລາວ........................................ 1

1.1 ຮູບຮ່າງລັກສະນະ ແລະ ວົງຈອນຊີວິດຂອງໂຕມ້ອນ.

1.2 ພັນມ້ອນພື້ນເມືອງ.

1.3 ການປັບປຸງແນວພັນໂຕມ້ອນ.

ບົດທີ 2: ມອນ........................................ 3

2.1 ຟັນຕົ້ນມອນ.

2.2 ການເລືອກໃຊ້ພັນຕົ້ນມອນ.

2.3 ການຂະຫຍາຍພັນມອນ.

2.4 ການເລືອກສະຖານທີ່ເຮັດສວນມອນ.

2.5 ການວາງແຜນປູກຕົ້ນມອນ.

2.6 ການກຽມດິນປູກມອນ.

2.7 ລະດູການ - ການປູກຕົ້ນມອນ.

2.8 ການດູແລຮັກສາສວນມອນ.

2.9 ການຕັດແຕ່ງຕົ້ນມອນ.

2.10 ການກຽມສວນມອນເພື່ອລ້ຽງມ້ອນອາຍຸນ້ອຍ - ອາຍຸແກ່.

2.11 ສັດຕູມອນ ແລະ ວິທີກຳຈັດ.

ບົດທີ 3: ການລ້ຽງມ້ອນ........................................ 13

3.1 ການກຽມອຸປະກອນການລ້ຽງມ້ອນ - ເຮືອນລ້ຽງມ້ອນ.

3.2 ການອະນາໄມອຸປະກອນການລ້ຽງມ້ອນ.

3.3 ການປັດມ້ອນ.

3.4 ດຳເນີນການລ້ຽງມ້ອນອາຍຸນ້ອຍ.

3.5 ການກຳນົດໃບມອນເກືອມ້ອນອາຍຸນ້ອຍ.

3.6 ການເລຍຂີ້ມ້ອນ ແລະ ຂະຫຍາຍພື້ນທີ່.

3.7 ການດຳເນີນການລ້ຽງມ້ອນອາຍຸແກ່

3.8 ມ້ອນນອນ - ມ້ອນຕື່ນ - ມ້ອນສຸກ.

3.9 ການເກັບມ້ອນສຸກເຂົ້າຈໍ່ ແລະ ດູແລ.

3.10 ສາເຫດການເກີດພະຍາດ ແລະ ສັດຕູອື່ນໆຂອງໂຕມ້ອນ.

3.11 ສູດຄິດໄລ່ເປີເຊັນເສັ້ນໄໝໃນຮັງຫລອກ ແລະ ເປີເຊັນໄໝດິບ.

3.12 ຂັ້ນຕອນດຳເນີນການສາວໄໝ.

3.13 ການເກັບຮັກສາແມ່ພັນມ້ອນເພື່ອລ້ຽງຮຸ່ນຕໍ່ໄປ.

# ບົດທີ 1

## ມ້ອນເມືອງລາວ

### 1. ຮູບຮ່າງລັກສະນະ ແລະ ວົງຈອນຊີວິດຂອງໂຕມ້ອນ.

ກ. ມ້ອນແມ່ນສັດປະເພດແມງກະບີ້ປ່ຽນແປງໄປຕາມຂັ້ນຕອນທີ່ແຕກຕ່າງກັນຈະເລີນເຕີບໂຕຜ່ານ 4 ໄລຍະຕາມວົງຈອນດັ່ງນີ້:

- ໄລຍະໄຂ່ ໃຊ້ເວລາ 9 -12 ວັນ
- ໄລຍະເປັນໂຕບົ້ງ, ມີ 5 ອາຍຸ, ແບ່ງເປັນ 2 ໄລຍະຄື: ອາຍຸ 1 - 3 ເປັນມ້ອນອອນ ອາຍຸ 4-5 ເປັນມ້ອນແກ່. ອາຍຸ 1 ກິນໃບມອນ 3-4 ວັນ, ອາຍຸ 2 ກິນໃບມອນ 2-3 ວັນ, ອາຍຸ 3 ກິນໃບມອນ 3-4 ວັນ, ອາຍຸ 4 ກິນໃບມອນ 4-5 ວັນ, ອາຍຸ 5 ກິນໃບມອນ 5-8 ວັນ.
- ໄລຍະເປັນດັກແດ້ ໃຊ້ເວລາ 7-9 ວັນ
- ໄລຍະແມງກະບີ້ ໃຊ້ເວລາ 2-3 ວັນ



## 2. ພັນມ້ອນພື້ນເມືອງ

ພັນມ້ອນທີ່ນິຍົມລ້ຽງໃນປະຈຸບັນຢູ່ໃນປະເທດລາວມີ:

- ນາງຫລວງຝັກຫລອກສີຂາວ, ເຫລືອງ.
- ນາງທຸຍຝັກຫລອກສີຂາວ, ເຫລືອງ.
- ນາງຂາວຝັກຫລອກຂາວ, ເຫລືອງ.
- ນາງນ້ຳຝັກຫລອກຂາວ, ເຫລືອງ (ໄຂ່ແຕກເອງປີລະເທື່ອ).

ໃນນັ້ນມ້ອນນາງນ້ຳອາຍຸຍາວກວ່າໝູ່ (45 ວັນ).

ພັນມ້ອນຂ້າງເທິງລ້ວນແຕ່ເປັນສາຍພັນພື້ນເມືອງແຂງແຮງທົນທານຕໍ່ພະຍາດໄດ້ດີ ສາມາດຮັກສາພັນເອງໄດ້ບໍ່ຕ້ອງຊື້ໄຂ່ມ້ອນ.





## 3. ການປັບປຸງແນວພັນໄຕມ້ອນ

ການປັບປຸງແນວພັນໄຕມ້ອນມີຄວາມສຳຄັນອັນໃຫຍ່ຫລວງຕໍ່ດ້ານເສດຖະກິດ. ມ້ອນເປັນສັດຊະນິດໜຶ່ງທີ່ໄດ້ເອົາໃຈໃສ່ປັບປຸງພັນຢ່າງຕໍ່ເນື່ອງ, ຖ້າລ້ຽງພັນເກົ່າຕໍ່ເນື່ອງເປັນເວລາຫລາຍປີຈະໃຫ້ໄຕມ້ອນມີບັນຫາ (ມ້ອນຕາຍ) ຫລື ຮັງຫລອກບາງລົງຕາມລຳດັບພາໃຫ້ໄດ້ເສັ້ນໄໝໜ້ອຍ.

<u>ສິ່ງຄວນເອົາໃຈໃສ່:</u>

- ໄຕມ້ອນທີ່ຈະເຮັດແນວພັນຕ້ອງແຍກລ້ຽງຕ່າງຫາກໃຫ້ມ້ອນແຂງແຮງ.
- ເລືອກຮັງຫລອກທີ່ສົມບູນໄວ້ເຮັດແນວພັນຕາມທີ່ຕ້ອງການ.
- ເອົາພໍ່ພັນທີ່ແຂງແຮງຈາກເຂດນີ້ປະສົມພັນກັບແມ່ພັນທີ່ແຂງແຮງມາຈາກເຂດອື່ນແມ່ພັນເຂດນີ້ປະສົມພັນກັບພໍ່ພັນເຂດອື່ນ, ແຊນສີ (ສີສັນ) ສ່ວນໃຫຍ່ໄດ້ແນວແມ່.

# ບົດທີ 2

## <u>ມອນ</u>

### 1. ພັນຕົ້ນມອນ:

ພັນຕົ້ນມອນທີ່ມີຢູ່ໃນປະເທດລາວ (ຕົ້ນມອນພື້ນເມືອງລາວ) ມີ:

- ຕົ້ນມອນແກ້ວ.
- ຕົ້ນມອນຂີ້ຮີດ.
- ຕົ້ນມອນນ້ອຍໃບແວກ ແລະ ໃບບໍ່ແວກ.
- ຕົ້ນມອນຍອດກໍ່າ.
- ຕົ້ນມອນກົນພາກ.





### 2. ການເລືອກໃຊ້ພັນຕົ້ນມອນ:

ກ່ອນທີ່ຈະຕັດສິນໃຈນຳໃຊ້ພັນມອນໃດໜຶ່ງໃຫ້ຄຳນຶງເບິ່ງເງື່ອນໄຂດັ່ງລຸ່ມນີ້:

- ກິ່ງມອນທີ່ເອົາມາເຮັດແນວພັນ ຕ້ອງສົມບູນບໍ່ເປັນພະຍາດ.
- ຂະໜາດເສັ້ນຜ່າໃຈກາງ 1,5 cm ຂຶ້ນໄປ.
- ມີອາຍຸແຕ່ 6 ເດືອນ-1 ປີ.
- ຂະໜາດຂອງໃບປານກາງຫາໃຫຍ່.
- ຂຸ່ມຂອງຕາຕ້ອງຖີ່.
- ມີຄຸນຄ່າອາຫານສູງ.
- ຕັດແຕງແລ້ວແຕກກິ່ງງ່າຫລາຍ.
- ທົນຕໍ່ສະພາບແວດລ້ອມໄດ້ດີ.
- ປູກແລ້ວມີອາຍຸຍາວໃຫ້ຜົນຜະລິດສູງ.

3. <u>ການຂະຫຍາຍພັນຕົ້ນບອນ:</u>

ຕົ້ນບອນສາມາດຂະຫຍາຍພັນໄດ້ງ່າຍ, ຂະຫຍາຍດ້ວຍ 2 ວິທີຄື: ການຊຳ ແລະ ປູກງ່າຄື:

ຊຳໃນຖົງຢາງປລາດສະຕິກໃນສ່ວນປະສົມດິນ1 ສ່ວນ+ດິນຊາຍ 1 ສ່ວນ+ຝຸ່ນຄອກ ½ ສ່ວນ ວິທີນີ້ສະດວກສະບາຍເວລາເຄື່ອນຍ້າຍໄປປູກໃນສວນເວລາປູກມີເປີເຊັນລອດຕາຍສູງ.ໄດ້ເອົາໃຈໃສ່ດູແລທົດນ້ຳຫລາຍກວ່າຊຳໃນໜານໃຊ້ຕົ້ນທຶນສູງ.



- ການຊຳໃນໜານກ້າເບີ້ຍເໝາະສົມສຳລັບຊາວບ້ານສະດວກໃນການດູແລທົດນ້ຳໃຊ້ຕົ້ນທຶນຕ່ຳ.



- ການປູກກິ່ງໃນສວນໂດຍກົງເປັນວິທີທີ່ງ່າຍສະດວກສະບາຍໃຊ້ແຮງງານໜ້ອຍ ແຕ່ເປືອງທ່ອນພັນຫລາຍບໍ່ຮັບປະກັນຄຸນນະພາບເປີເຊັນລອດຕາຍຕ່ຳ (ຕ້ອງເບິ່ງສະພາບຂອງດິນທີ່ຈະປູກຖ້າດິນແຫ້ງແລ້ງຫ້າມປູກກິ່ງ).



## 4. <u>ເລືອກສະຖານທີ່ເຮັດສວນມອນ:</u>

ກ່ອນອື່ນຕ້ອງຄຳນຶງເຖິງສະພາບຂອງ ດິນຕ້ອງເປັນດິນທີ່ມີຄຸນນະພາບດີ ດິນຊາຍປົນດິນໜຽວ (ດິນແຄມນ້ຳ) pH>5 ມີໜ້າດິນເລິກບໍ່ຕ່ຳກວ່າ 1 m ເປັນດິນຊຸ່ມຊື່ນເໝາະສົມດີ (ບໍ່ແຫ້ງແລ້ງເກີນໄປ, ນ້ຳບໍ່ຂັງ).

- ສວນມອນຕ້ອງບໍ່ຢູ່ຫ່າງໄກຈາກເຮືອນລ້ຽງມ້ອນຫລາຍຈົນເກີນໄປດີທີ່ສຸດບໍ່ຄວນເກີນ 1 Km ເພາະຈະບໍ່ສະດວກໃນການຂົນສົ່ງໃບມອນ.
- ສວນມອນບໍ່ຄວນຢູ່ໃກ້ເຮືອນລ້ຽງມ້ອນຈົນເກີນໄປຢ່າງໜ້ອຍຕ້ອງ 50 m.
- ຫລີກເວັ້ນການຕິດເຊື້ອພະຍາດຈາກສິ່ງເສດເຫລືອການລ້ຽງມ້ອນ.

## 5. ການວາງແຜນປູກຕົ້ນມອນ:

- ກ່ອນອື່ນຕ້ອງອີງໃສ່ຄວາມສາມາດທາງດ້ານແຮງງານ (ຕ້ອງວາງແຜນ) ຈະລ້ຽງມ້ອນ. ລ້ຽງຊຸດໜຶ່ງຫລາຍປານໃດ, ຮູ້ແລ້ວວ່າແມ່ພັນ 1 ແມ່ບີ້ຕອບສະໜອງໄຂ່ໄດ້ 300 ໜ່ວຍ. ຕ້ອງການໃບມອນປະມານ 5 Kg (ບໍ່ນັບງ່າ) ນັບຈາກປັດມ້ອນຈົນຮອດມື້ມ້ອນສຸກ.
- ຖ້າລ້ຽງມ້ອນ 20.000 ໄຕເທົ່າ 65 ຄູ່ (ພໍ່ບີ້+ແມ່ບີ້) ຕ້ອງການໃບມອນປະມານ 320 Kg ຕ້ອງມີສວນມອນ 1 ໄລ່ (ມອນພື້ນເມືອງ).
- ຕ້ອງການເນື້ອທີ່ລ້ຽງໄຕມ້ອນ 18-20 ຕາແມັດ (ອາຍຸ 5).
- ເນື້ອທີ່ແຕະໃສ່ຈໍ່ໃຫ້ມ້ອນເຮັດຮັງເທົ່າກັບສອງເທື່ອຂອງເນື້ອທີ່ລ້ຽງອາຍຸ 5 ມື້ສຸດທ້າຍເພື່ອຫລຸດຜ່ອນຈຳນວນຂອງຮັງຫລອກແຝດ, ດ້ານ, ຜິດຮູບປະພັນ ແລະ ອື່ນໆ.
- 1 ແຮງງານສາມາດລ້ຽງມ້ອນໄດ້ 20.000 ໂຕ/ງວດລ້ຽງເປັນຈຳນວນຫລາຍຕ້ອງຄຳນຶງເຖິງປັດໃຈ 3 ຢ່າງຄື:

1. ແຮງງານ (ລ້ຽງມ້ອນ+ສາວໄໝ).
2. ປະລິມານໃບມອນທີ່ມີສວນ.
3. ອຸປະກອນສຳລັບເນື້ອທີ່ລ້ຽງໄຕມ້ອນ.

### <u>ກຳນົດການໃຊ້ແຮງງານຜະລິດກິດຈະກຳປູກຕົ້ນມອນ</u>

<u>ໄລຍະການປູກ:</u>

- ໄລຍະຕົ້ນ 0,75 ມ, ໄລຍະແຖວ 1,5ມ (ໃຊ້ແຮງງານ).
- ໄລຍະຕົ້ນ 0,75 ມ, ໄລຍະແຖວ 2 ມ (ໃຊ້ລົດໄຖນ້ອຍ).
- ໄລຍະຕົ້ນ 0,75 ມ, ໄລຍະແຖວ 2,5 ມ (ໃຊ້ລົດໄຖກາງ).
- ໄລຍະຕົ້ນ 0,75 ມ, ໄລຍະແຖວ 3 ມ (ໃຊ້ລົດໄຖໃຫຍ່).

- ໄລຍະຕົ້ນ 1 ມ  ໄລຍະແຖວ 1 ມ  (ສຳລັບດິນຄ້ອຍຊັນ)

+ <u>ສູດຄິດໄລ່ເບ້ຍມອນໃນສວນ;</u>

$$\text{ຈຳນວນເບ້ຍມອນໃນເນື້ອທີ່ຈະປູກ} = \frac{\text{ເນື້ອທີ່ (ຕາແມັດ)}}{\text{ໄລຍະຕົ້ນ (ແມັດ)} \times \text{ໄລຍະແຖວ (ແມັດ)}}$$

ສວນມອນ 1 ໄລ່ສາມາດລ້ຽງມ້ອນໄດ້ 20.000 ໂຕ / ຮອດລ້ຽງ ຫລື / (1 ປາງ). ຖ້າຢາກລ້ຽງຫລາຍຮຸ່ນຕໍ່ໆກັນໃນຈຳນວນ 20.000 ໂຕຕ້ອງມີສວນມອນເພີ່ມຂື້ນຕາມຮຸ່ນລ້ຽງ.

- ຖ້າມີສວນມອນ 1 ໄລ່ແຕ່ຢາກລ້ຽງຫລາຍຮຸ່ນກໍ່ຕ້ອງຫລຸດຈຳນວນໂຕມ້ອນລົງ.

## 6. <u>ການກຽມດິນປູກມອນ:</u>

ໂດຍທົ່ວໄປແລ້ວຖ້າມີເຄື່ອງມືກົນຈັກຕ້ອງໄຖຄາດພວນດິນເລຍກ່ອນຈຶ່ງຂຸດຂຸມ ຫລື ຮ່ອງແລ້ວແຕ່ຄວາມເໝາະສົມທີ່ຈະໄຖຄາດແກ່ກໍ່ຂຸດຮ່ອງ ຫລື ຂຸດຂຸມເລີຍ.

- ຂຸດຂຸມຂະໜາດ 40 ຊມ x 40 ຊມ, ເລິກ 40 ຊມ.
- ຂຸດຮ່ອງຂະໜາດກວ້າງ 40 ຊມ x 40 ຊມ ເລິກ 40 ຊມ. ຄວາມຍາວແລ້ວແຕ່ຕ້ອງການ.
- ເອົາເສດພືດ, ເຟືອງເຂົ້າລົງໃນຂຸມ ຫລື ຮ່ອງທີ່ຂຸດກຽມໄວ້ນັ້ນຢຽບໃຫ້ໄດ້ກາງຂຸມ,ໂຮຍປຸຍຂາວລົງໃສ່ອີກ (ຖ້າມີ) ຖົມດິນໃຫ້ເຕັມຂຸມປະໄວ້.
- ຖ້າເປັນເສດພືດທີ່ແຫ້ງຕ້ອງຖົມໄວ້ຢ່າງໜ້ອຍ 30 ວັນຂື້ນໄປຕະຫລອດເວລາທີ່ກຳນົດຂ້າງເທິງເປັນການລໍຖ້າການເນົ່າເປື່ອຍຂອງເສດພືດ, ໄລຍະນີ້ເສດພືດຈະອອກຮ້ອນຖ້າປູກກ່ອນກຳນົດຈະເຮັດໃຫ້ຕົ້ນມອນຕາຍ.

## 7. ລະດູການ - <u>ການປູກຕົ້ນມອນ</u>

ໂດຍທົ່ວໄປແລ້ວສາມາດປູກຕົ້ນມອນໄດ້ທຸກລະດູຖ້າຫາກວ່າສະຖານທີ່ແຫ່ງນັ້ນມີຊຸ່ມລະປະທານນ້ຳລະດວກຕະຫລອດປີ.

- ຖ້າສະຖານະການທີ່ປູກມອນອາໃສແຕ່ທຳມະຊາດຕ້ອງປູກໄລຍະຕົ້ນລະດູຝົນໝາຍຄວາມວ່າ: ໄລຍະຫລັງຈາກປີໃໝ່ລາວຄື: ເດືອນ 4-5 ຂອງທຸກໆປີ.
- ຖ້າປູກກິ່ງງ່າ ຕ້ອງປູກກ່ອນເດືອນ 4 ຂອງທຸກໆປີຖ້າສະພາບແຫ້ງແລ້ງບໍ່ຄວນປູກງ່າ.

- ເວລາເຄື່ອນຍ້າຍເບ້ຍມອນອອກຈາກພານຊໍາຈະໄປປູກຕ້ອງຕັດແຕ່ງກິ່ງ ແລະ ງ່າເສຍກ່ອນ.
- ຖ້າເບ້ຍມອນຫາກມີຫລາຍກິ່ງໃຫ້ເລືອກຮັກສາໄວ້ກິ່ງດຽວທີ່ສົມບູນກວ່າໝູ່ແລ້ວຕັດຈົ່ງໄວ້ປະມານ 8 -10 ຊມ ເທົ່ານັ້ນ







ບໍ່ຄວນຖອນຕົ້ນມອນອອກຈາກພານປະໄວ້ຫລາຍມື້.

8. ການດູແລຮັກສາສວນໝອນ:

ຫລັງຈາກປູກຕົ້ນໄມ້ໝອນໃນສວນເປັນທີ່ຮຽບຮ້ອຍແລ້ວຕ້ອງໄດ້ເອົາໃຈໃສ່ຕິດຕາມຢ່າງໃກ້ຊິດ ເບີເຊັນລອດຕາຍຫລາຍປານໃດ (ໃຫ້ມີໂອກາດປູກແທນ) ອາກາດແຫ້ງແລ້ງ ຫລື ນ້ຳຂັງ.

- ເອົາໃຈໃສ່ດູແລເສຍຫຍ້າເວລາຕົ້ນໝອນບໍ່ທັນແຂງແຮງ. ຖ້າເປັນເຂດທີ່ມີສັດລ້ຽງປ່ອຍຊະຊາຍ ຕ້ອງເອົາໃຈໃສ່ຮົ້ວເປັນພິເສດ.
- ຮັກສາຄວາມຊຸ່ມຊື່ນ ແລະ ກຳຈັດວັດສະພືດດ້ວຍວິທີເອົາເຟືອງເຂົ້າ, ເສດຕ່າງໆຂອງຖົ່ວເຫລືອງຖົ່ວຂຽວ,ແກບ, ຂີ້ເລື່ອຍ ແລະ ເສດພືດອື່ນໆຄຸມໜ້າດິນຕາມຫວ່າງຕົ້ນໝອນ.



→ ໃສ່ຝຸ່ນຕົ້ນໝອນມີ 3 ວິທີທີ່ນິຍົມໃຊ້ຄື:

- ຕົ້ນໝອນທີ່ຫາກໍ່ປູກປີທຳອິດໃຊ້ຈົກນ້ອຍຂຸດອ້ອມກົກຕົ້ນໝອນຫ່າງຈາກກົກປະມານ 25-30 ຊມ ໂຮຍຝຸ່ນຄອກໃສ່ຮ່ອງທີ່ຂຸດແລ້ວຖົມໄວ້.
- ຂຸດຂຸມລະຫວ່າງລື່ນຕໍ່ຕົ້ນ, ບາ 1 ຫວ່າງຈຶ່ງຂຸດອີກຂຸມໜຶ່ງ, ເສຍຫຍ້າຕາມຫວ່າງຕົ້ນໝອນນັ້ນລົງຂຸມແລ້ວ ຖົມໄວ້ເຮັດປີລະຄັ້ງດ້ວຍວິທີສັບປ່ຽນບ່ອນຂຸດ.
- ຂຸດຮ່ອງລະຫວ່າງແຖວຕາມລວງຍາວຂະໜາດກວ້າງ 30 ຊມ ເລິກ 30 ຊມ ຍາວຢູ່ຕາມແຖວຂອງຕົ້ນໝອນ (ບາະແຖວຂຸດ) ເສຍຫຍ້າຕາມລະຫວ່າງຕົ້ນໝອນລົງຮ່ອງໂຮຍຝຸ່ນຄອກລົງໄປອີກໂຮຍທັບດ້ວຍປູນຂາວ (ຖ້າມີ).

## 9. ການຕັດແຕ່ງຕົ້ນມອນ

ກ. ການຕັດຕໍ່:

- ຕັດ 1 ຄັ້ງຕໍ່ປີເໝາະສົມລະຫວ່າງເດືອນ 12-3 ຂອງທຸກໆປີ.
- ວິທີຕັດຖ້າເປັນຕົ້ນມອນປູກປີທຳອິດໃຫ້ຕັດຫ່າງຈາກໜ້າດິນ 30 ຊມຖ້າເປັນຕົ້ນມອນປີທີສອງຂຶ້ນໄປໃຫ້ຕັດຫ່າງຈາກບ່ອນເກົ່າປະມານ 3-5 ຊມ ຫລັງຈາກຕັດແລ້ວໃຊ້ເວລາ 75-90 ວັນໄດ້ເກັບກ່ຽວໃບມອນໄປລ້ຽງມ້ອນ

ຕັດຕ່ຳປີທີ່1




ຕັດຕ່ຳປີທີ2




ຕັດຕ່ຳປີທີ່3




ຂ. ຕັດກາງ:

- ແມ່ນຕັດຫລັງຈາກເກັບກ່ຽວໃບມອນໄປລ້ຽງມ້ອນຄັ້ງທີ 1 (ພົນຈາກການຕັດຕ່ຳ) ຕັດກາງໃຊ້ເວລາ 60-75 ວັນຈຶ່ງໄດ້ເກັບຜົນ.

- ວິທີຕັດ: ສັງເກດເບິ່ງສີຂອງກິ່ງ ຫລື ລຳຕົ້ນມອນຈະມີສີນ້ຳຕານເຊື່ອມຕໍ່ກັບສີຂຽວຕັດລະຫວ່າງ ກາງສີຂຽວກັບສີນ້ຳຕານ (ລະຫວ່າງກາງຂອງຕົ້ນ).

ຄ. <u>ຕັດສຸງ ຫລື ເດັດຍອດ:</u>

- ວິທີນີ້ເໝາະສົມສຳລັບການກຽມໃບມອນລ້ຽງມ້ອນອາຍຸນ້ອຍ (ມີຫລາຍຍອດໃບອ່ອນຫລາຍ)ໃຊ້ ເວລາ 35-40 ວັນສາມາດເກັບກ່ຽວຄືນໄດ້.

## 10. ການກຽມສວນມອນເພື່ອລ້ຽງມ້ອນອາຍຸນ້ອຍ - ອາຍຸແກ່

ກ. <u>ມ້ອນອາຍຸອ່ອນກຳນົດແຕ່ອາຍຸ</u> 1-3

- ອາຍຸ 1 ເກັບໃບທີ 1-3
- ອາຍຸ 2 ເກັບໃບທີ 4-6
- ອາຍຸ 3 ເກັບໃບທີ 7-9



ຖ້າຢາກໄດ້ໃບມອນຕາມທີ່ກ່າວມາຂ້າງເທິງຕ້ອງຕັດແຕ່ງຕົ້ນມອນໃຫ້ຖືກຕາມເຕັກນິກ. ໄລຍະນີ້ໃ ມ້ອນຍັງນ້ອຍຕ້ອງການໃບມອນທີ່ອ່ອນນຸ່ມມີຄວາມຈຳເປັນຕ້ອງຕັດແຕ່ງໂດຍສະເພາະຂອງມັນ.

- ແບ່ງລວມມອນ 20% ຕັດແຕ່ງເພື່ອລ້ຽງມ້ອນອາຍຸນ້ອຍດ້ວຍວິທີເດັດຍອດກ່ອນການລ້ຽງ 35-40 ວັນ.

ຂ. ມ້ອນແກ່ກຳນົດແຕ່ອາຍຸ 4 - 5

- ມ້ອນອາຍຸແກ່ສາມາດກິນໃບມອນໄດ້ທຸກປະເພດຍົກເວັ້ນໃບທີ່ເປັນພະຍາດ ແລະ ແກ່ຈົນກອບ.

## 11. ສັດຕູມອນ ແລະ ວິທີກຳຈັດ

- ພະຍາດທີ່ທຳລາຍຕົ້ນມອນມີ: ຈຳພວກເພ້ຍ, ລາລນິນ, ບົ້ງມ້ວນໃບ, ດ້ວງເຈາະລຳຕົ້ນຈຳພວກບົ້ງເປັນຕົ້ນ.
- ວິທີກຳຈັດເມື່ອເຫັນພະຍາດເພ້ຍ, ລາສນິນ, ບົ້ງມ້ວນໃບ ໃຫ້ຕັດຮອນຮອນໄປເຜົາໄຟ.
- ຈຳພວກດ້ວງເຈາະລຳຕົ້ນໃຫ້ແຕ່ງນ້ຳສະໝຸນໄພສີດເຂົ້າຕາມຮູເພື່ອຂັບໄລ່ ຫ້າມໃຊ້ສານເຄມີເພື່ອຂັບໄລ່ (ຫລີກເວັ້ນສານຕົກຄ້າງ).

<u>ບົດທີ 3</u>

# ການລ້ຽງມ້ອນ

## 1. ການກຽມອຸປະກອນການລ້ຽງມ້ອນ - ເຮືອນລ້ຽງມ້ອນ

- ກ່ອນການລ້ຽງມ້ອນຕ້ອງໄດ້ສຳຫລວດເບິ່ງອຸປະກອນທີ່ຈຳເປັນທີ່ສົມໃຊ້ມີພຽງພໍ ຫລື ຍັງຂາດອັນໃດ ເຊັ່ນ: ກະດົ້ງມອນ (ໃຫ່ມອນ), ຮ້ານມ້ອນ, ຜ້າປົກ, ຂົນໄກ່, ຊຽງ, ມີດ, ກະຕ່າ, ໄມ້ທູ່, ຕາໜ່າງ ເລຍຂີ້ມ້ອນ, ແຕະໃສ່ມ້ອນສຸກ, ຈໍໃຫ້ມ້ອນສານຮັງຈຳພວກນີ້ເປັນຕົ້ນ ແລະ ເຄື່ອງທີ່ຈຳເປັນອື່ນໆ.



ກ. ການລ້ຽງມ້ອນເປັນລະບົບຕ້ອງມີເຮືອນລ້ຽງມ້ອນຕ່າງຫາກທີ່ສາມາດປ້ອງກັນສັດຕູໃຫ້ມ້ອນໄດ້ເຊັ່ນ: ໜູ, ແມງວັນລາຍ, ມົດ, ຈີ້ໂກ່ະ, ຈີ່ກຸ້ງ ແລະ ອື່ນໆມີຫ້ອງດັກແມງວັນ.

ຂ. ສະຖານທີ່ຕັ້ງເຮືອນລ້ຽງມ້ອນຕ້ອງເອົາໃຈໃສ່ຄື:

- ອາກາດປອດໂປ່ງ.
- ຫ່າງໄກຈາກສະຖານທີ່ໃຊ້ສານເຄມີ.
- ຫ່າງໄກຈາກຊຸມຊົນທີ່ແອອັດ





## 2. ການອະນາໄມອຸປະກອນຮັບໃຊ້ ແລະ ເຮືອນລ້ຽງມ້ອນ:

ກ. ການທຳຄວາມສະອາດອຸປະກອນ:

- ລ້າງວັດຖຸອຸປະກອນໂດຍການລ້າງດ້ວຍສະບູຝຸ່ນ (ໃຊ້ແປງຖູ) ຕາກແດດໃຫ້ແຫ້ງລ້າງທຸກຄັ້ງກ່ອນ ແລະ ຫລັງການລ້ຽງມ້ອນ.
- ຫລັງຈາກລ້າງແລ້ວໃຫ້ແຊ່ນ້ຳຢາ ກລໍລີນ 60% ໃນອັດຕາສ່ວນກລໍ 100 g ປະສົມກັບນ້ຳ 10 ລິດ (ຖ້າມີ) ຈຶ່ງນຳໄປຕາກແດດໃຫ້ແຫ້ງແລ້ວເກັບໄວ້ໃນເຮືອນລ້ຽງ.



ຂ. ການທຳຄວາມສະອາດເຮືອນລ້ຽງມ້ອນ:

- ລ້າງຖູພື້ນເຮືອນລ້ຽງ, ຮ້ານລ້ຽງ, ຝາບໍລິເວນພາຍໃນ ແລະ ພາຍນອກດ້ວຍສະບູຝຸ່ນສີດນ້ຳລ້າງໃຫ້ສະອາດ ຫລັງຈາກນັ້ນສີດສ່ວນປະສົມຂອງຢາ ກລໍລີນ ໃຫ້ທົ່ວ ເຊັດກ່ອນ ແລະ ຫລັງການລ້ຽງມ້ອນ.



## 3. ການປັດໂຕມ້ອນ

ໄຂ່ໂຕມ້ອນສ່ວນໃຫຍ່ຈະວາງໄຂ່ໃສ່ເຈ້ຍ ຫລື ແຜ່ນແພໃກ້ຈະຮອດກຳນົດແຕກໃຫ້ຕິດຕາມ.



- ເວລາໂຕມ້ອນແຕກອອກມາໃຫ້ສັງເກດເບິ່ງວ່າຖ້າມ້ອນແຕກຈຳນວນຫລາຍໃຫ້ທຳການປັດໂຕມ້ອນ ບໍ່ຄວນປະໄວ້ຂ້າມຄືນສ່ວນເຫລືອຈຶ່ງໄວ້ປັດມື້ຕໍ່ໄປ.
- ບໍ່ຄວນເກືອໂຕມ້ອນທັບໄຂ່ໂດຍບໍ່ທຳການປັດມ້ອນທີ່ແຕກຕາມຫລັງຈະໃຫຍ່ບໍ່ທັນກັນເປັນສາຍເຫດ ໃຫ້ໂຕມ້ອນນອນຕື່ນບໍ່ພ້ອມກັນ.

ກ. <u>ວິທີປັດໄຕມ້ອນ:</u>

- ຊອຍໃບມອນອ່ອນສີນ້ຳຕານໃຫ້ມຸ່ນໆ ໂຮຍໃສ່ຕາມບໍລິເວນໄຕມ້ອນນ້ອຍ.
- 10 ນາທີຕໍ່ມາທຳການປັດໄຕມ້ອນດ້ວຍຂົນໄກ່ໃສ່ກະດົ້ງທີ່ກຽມໄວ້.
- ຂະຫຍາຍເນື້ອທີ່ໃຫ້ເໝາະສົມ.
- 10 ນາທີຕໍ່ມາທຳການເກືອມ້ອນເປັນຄາບທຳອິດ.



## 4. <u>ດຳເນີນການລ້ຽງມ້ອນອາຍຸນ້ອຍ (ອາຍຸ 1-3):</u>

- ໂຕມ້ອນນ້ອຍເໝືອນເດັກນ້ອຍທາກໍ່ເກີດໃໝ່ຄວນເອົາໃຈໃສ່ດູແລເປັນພິເສດຂອງໄລຍະມ້ອນອາຍຸນ້ອຍໃຊ້ເວລາ 10-11 ວັນ, ເກືອມ້ອນວັນລະ 3-4 ເທື່ອ.

**ຕາຕະລາງການລ້ຽງມ້ອນ 20.000ໂຕ.**

| ອາຍຸ | ຈຳນວນໃບມອນ | ອຸນະພູມ | ຄວາມຊຸ່ມ | ເວລາກິນໃບມອນ | ເວລານອນ | ເນື້ອທີ່ |
|---|---|---|---|---|---|---|
| ອາຍຸ 1 | 1,8 – 1,9 kg | 28˚c | 8–90% | 2 ມື້ 3 ຊົ່ວໂມງ | 1 ມື້ | 0,4-1,6 $M^2$ |
| ອາຍຸ 2 | 5 kg | 27˚c | 80-85% | 2 ມື້ | 1 ມື້ | 1,6-3,2 |
| ອາຍຸ 3 | 15 kg | 26˚c | 70-80% | 2,5 ມື້ | 1 ມື້ | 3,2-6,4 |

## 5. <u>ການປິດໃບມອນ:</u>

- ການປິດໃບມອນຄວນຫລີກເວັ້ນເວລາແດດຮ້ອນໂພດ ແລະ ເວລາກຳລັງຝົນຕົກ.
- ການຊອຍໃບມອນຊອຍເປັນຮູບສີ່ຫລ່ຽມລວງກ້ວາງເທົ່າກັບລວງຍາວຂອງໂຕມ້ອນ, ລວງຍາວເທົ່າສອງເທື່ອຂອງລວງກ້ວາງ.

## 6. <u>ການເສຍຂີ້ໂຕມ້ອນ:</u>

ກ. <u>ຈຸດປະສົງ:</u>

- ລຸດຜ່ອນຄວາມຊຸ່ມໃນກະດົ້ງມ້ອນ.
- ໃຫ້ໂຕມ້ອນໄດ້ກິນໃບມອນໃໝ່ ແລະ ສົດສະເໝີ.
- ນຳເອົາເສດໃບມອນທີ່ເຫລືອ ແລະ ເຊື້ອພະຍາດໄປຖິ້ມ.
- ໃຊ້ຕາໜ່າງເສຍຂີ້ມ້ອນບໍ່ຄວນໃຊ້ມືຈັບໂຕມ້ອນນ້ອຍ (ໃຊ້ໄມ້ຖູ).

ຂ. <u>ຄວນເສຍຂີ້ມ້ອນອາຍຸນ້ອຍດັ່ງນີ້:</u>

- ອາຍຸ 1 ເສຍຂີ້ 1 ເທື່ອ ກ່ອນມ້ອນນອນຄັ້ງທີ 1.
- ອາຍຸ 2 ເສຍຂີ້ 2 ເທື່ອ ຕື່ນນອນຄັ້ງທີ 1 ແລະ ກ່ອນນອນຄັ້ງທີ 2.
- ອາຍຸ 3 ເສຍຂີ້ 2 ເທື່ອ ຕື່ນນອນຄັ້ງທີ 2 ແລະ ກ່ອນນອນຄັ້ງທີ 3.

ຄ. <u>ການຂະຫຍາຍເນື້ອທີ່:</u>

- ເພື່ອບໍ່ໃຫ້ໂຕມ້ອນຢູ່ຢ່າງແອອັດ.
- ຫລຸດຄວາມຊຸ່ມ ແລະ ຄວາມຮ້ອນໃນກະດົ້ງມ້ອນ.
- ໃຫ້ໂຕມ້ອນໄດ້ກິນໃບມອນຢ່າງທົ່ວເຖິງ.

## 7. ດຳເນີນການລ້ຽງມ້ອນອາຍຸແກ່:

ກ. ການຄວບຄຸມອຸນຫະພູມ ແລະ ຄວາມຊຸ່ມ:

- ຫລຸດຄວາມຮ້ອນ: ໄຂປ່ອງຢ້ຽມ, ສີດນ້ຳໃສ່ພື້ນເຮືອນລ້ຽງ, ສີດນ້ຳໃສ່ຫລັງຄາມຸງສັງກະສີ.
- ເພີ່ມຄວາມອຸ່ນ: ໃຕ້ດອກໄຟ ຫລື ດັງຖ່ານໄຟໃສ່ເຕົາໄວ້ໃນເຮືອນລ້ຽງ.
- ຫລຸດຄວາມຊຸ່ມ: ໄຂປ່ອງຢ້ຽມໃຫ້ອາກາດຖ່າຍເທ ຫລື ໃຊ້ພັດລົມເປົ່າ.
- ເພີ່ມຄວາມຊຸ່ມ: ໃຊ້ກ້ອງສີດນ້ຳຝອຍ,ໃຊ້ແພຈຸ່ມນ້ຳພັນພາດໆອ້ອມຮ້ານລ້ຽງ ຫລື ສີດພື້ນເຮືອນລ້ຽງ.

**ຕາຕະລາງລ້ຽງມ້ອນແກ່ (ອາຍຸ 4-5).**

| ອາຍຸ | ຈຳນວນໃບ kg | ອຸນຫະພູມ | ຄວາມຊຸ່ມ | ເວລາກິນໃບມອນ | ເວລານອນ | ເນື້ອທີ່ |
|---|---|---|---|---|---|---|
| ອາຍຸ 1 | 64,5 kg | 25°c | 75-80% | 3 ມື້ 5 ຊົ່ວໂມງ | 1 ມື້ 19 ຊົ່ວໂມງ | 6,4-10 |
| ອາຍຸ 5 | 235 kg | 24° | 70-75% | 6 ມື້ | 0 | 10-20 |

ການດູແລຄືກັນກັບມ້ອນນ້ອຍ ຕ່າງກັບບ່ອນວ່າໂຕມ້ອນກິນໃບມອນຫລາຍຮອດອາຍຸ 5 ຕ້ອງໃຕ່ເລຍອີ່ທຸກມື້, ກວດກາເບິ່ງສຸຂະພາບຂອງໂຕມ້ອນກ່ອນໃຫ້ອາຫານທຸກໆຄັ້ງມ້ອນຕາຍ ຫລື ມີເຊື້ອພະຍາດໃຊ້ຫູ່ຄີບໂຕມ້ອນຕາຍໃສ່ກວດເຫລົ້າ 60.




ຂ. ການລ້ຽງມ້ອນລະດູຝົນຕ້ອງເອົາໃຈໃສ່ພິເສດຍ້ອນອາກາດຮ້ອນ ຄວາມຊຸ່ມສູງ ໃຫ້ເອົາໃຈໃສ່ເລຍອີ່ບໍ່ລ້ຽງແໜ້ນກະດົ້ງ, ເກືອໃບມອນບາງໃຫ້ໃບມອນຫລາຍເທື່ອຕໍ່ມື້ຖ້າໃບມອນປຽກຕ້ອງເຊັດ ຫລື ພຶ່ງຕາກໄວ້ໃນຮົ່ມ.

## 8. ໂຕມ້ອນນອນ - ໂຕມ້ອນຕື່ນ - ໂຕມ້ອນສຸກ.

ກ. ມ້ອນນອນ ຫລືເອີ້ນວ່າ (ມ້ອນຫລອກຄາບ)

- ໂຕມ້ອນຕັ້ງຫົວຂຶ້ນ - ບໍ່ເໜັງຕີງ - ບໍ່ກິນໃບມອນ.
- ຫົວໃຫຍ່, ປາກນ້ອຍ, ມີສີເຫລືອງ, ຂາມີສີໃສ



ຂ. ມ້ອນຕື່ນ

- ໂຕມ້ອນເລືອຄານໃບມອນ - ກິນໃບມອນ - ຕົວນ້ອຍລົງ



ຄ. ມ້ອນສຸກ

- ໂຕມ້ອນຫົດສັ້ນເຂົ້າ.
- ມີສີເຫລືອງ (ມ້ອນພື້ນເມືອງສີເຫລືອງ).
- ສີໃສ (ມ້ອນພື້ນເມືອງສີຂາວ).
- ແກວ່ງຫົວໄປມາເພື່ອຊອກຫາບ່ອນເຮັດຮັງ (ເຮັດຝັກຫລອກ).
- ຂີ້ມ້ອນມີຂະໜາດໃຫຍ່ປົນຈະມຸ່ນມີສີຂຽວ.

- ປາກມີເສັ້ນໄຍພົ່ນອອກມາ



## 9. ການເກັບມ້ອນສຸກເຂົ້າຈໍ່ ແລະ ການດູແລຮັກສາ.

- ຕ້ອງເກັບມ້ອນສຸກໃຫ້ທັນເວລາຖ້າຊັກຊ້າມ້ອນຈະພົ່ນໄຍຖິ້ມເສຍລ້າໆ.
- ເກັບມ້ອນສຸກເຂົ້າຈໍ່ໃນອັດຕາສ່ວນປະມານ 600 ໂຕ / 1 ມ$^2$
- ຖ້າໃສ່ມ້ອນໃນແຕ່ລະຈໍ່ຖີ່ເທົ່າໃດຍິ່ງມີໂອກາດໄດ້ຮັງແຝດ, ດ້າງ, ຮັງຊຸດຄຸນນະພາບຫລາຍຂຶ້ນເທົ່ານັ້ນ.
- ຈໍ່ໃສ່ມ້ອນຖ້າເກັບໄວ້ກໍ່ຈະສິ້ນເປືອງເນື້ອທີ່ແດ່.
- ໃສ່ຈໍ່ແລ້ວເອົາຕັ້ງປົກ



ກ. ການດູແລຮັກສາມ້ອນເວລາເຮັດຝັກຫລອກ.

- ອຸນຫະພູມທີ່ເໝາະສົມແມ່ນ 23°c
- ຄວາມຊຸ່ມທີ່ເໝາະສົມ 60 – 70%
- ມ້ອນເຂົ້າຮັງໄດ້ 3 ວັນຄວນເປີດປ່ອງຢ້ຽມໃຫ້ອາກາດລອງ ອາກາດແຫ້ງສັງຫລອກຈະສາວງ່າຍ, ອາກາດຊຸ່ມຫລາຍຈະສາວຍາກເສັ້ນໄໝມັກຂາດ
- ຄວນໃຊ້ເຕົາຖ່ານເພື່ອລຸດຄວາມຊຸ່ມເວລາຝົນຕົກໜັກ.

## 10. ສາຍເຫດການເກີດພະຍາດ ແລະ ສັດຕູອື່ນໆຂອງໄຕມ້ອນ

ກ. ເກີດຈາກສິ່ງທີ່ບໍ່ມີຊີວິດ.

- ໄດ້ແກ່ສະພາບແວດລ້ອມ, ອາຍພິດຈາກສານເຄມີຕ່າງໆ.
- ຄຸນນະພາບ ແລະ ປະລິມານໃບມອນ ຫລື ການບົວລະບັດຮັກສາການລ້ຽງເກືອພາໃຫ້ເກີດບາດແຜເປັນຕົ້ນ.

ຂ. ເກີດຈາກສິ່ງທີ່ມີຊີວິດ

- ໄດ້ແກ່ຈຸລິນຊີຕ່າງໆເຊັ່ນ: ເຊື້ອລາ, ແບັກເຕີເຣຍ, ໂປໂຕໂຊອົວ, ໄວຣັດລວມເຖິງສັດອື່ນໆນຳຄື: ແມງວັນລາຍ,ມົດ, ໜູ, ຈີ້ໂກະ, ຈີ່ກຸ້ງ ແລະ ອື່ນໆ.

## 11. ສູດຄິດໄລ່ເປີເຊັນເສັ້ນໄໝໃນຮັງຫລອກ ແລະ ໄໝດິບ

ກ. ສູດຄິດໄລ່ເປີເຊັນເສັ້ນໄໝໃນຮັງຫລອກ

$$\text{ເປີເຊັນເສັ້ນໄໝ} = \frac{\text{ນ້ຳໜັກເປືອກຫລອກເປົ່າ}}{\text{ນ້ຳໜັກຮັງຫລອກເຕັມ}} \times 100$$

ຂ. ສູດຄິດໄລ່ນ້ຳໜັກໄໝດິບຫລັງຈາກຮູ້ເປີເຊັນເສັ້ນໄໝແລ້ວ

$$\text{ນ້ຳໜັກດິບ} = \frac{\text{ນ້ຳໜັກຮັງຫລອກເຕັມ} \times \text{ເປີເຊັນເສັ້ນໄໝ}}{100}$$

## 12. ຂັ້ນຕອນດຳເນີນການສາວໄໝ

- ກ່ອນຈະປົດຮັງຫລອກນຳມາສາວໃຫ້ສັງເກດວ່າເປັນໂຕດັກແດ້ແລ້ວ ຫລື ຍັງ.
- ຫ້າມສາວໄໝກ່ອນໂຕມ້ອນເປັນໂຕດັກແດ້
- ດັກແດ້ມ້ອນໃນຮັງຫລອກປົກກະຕິມີອາຍຸ 7-9 ວັນ.

ກ. ກຸ່ມອຸປະກອນ

- ເຕົາ,ໝໍ້ຕົ້ມຮັງຫລອກ, ໝາກຄ້ອງ (ເຄື່ອງສາວໄໝ), ໄມ້ຄີບ, ບ່ວງຈອງ, ຊາມ, ຮົກ, ເຄື່ອງເຮັດປອຍໄໝ, ຜ້າຍໄພໄໝ ແລະ ເຄື່ອງໃຊ້ທີ່ຈຳເປັນອື່ນໆ









ຂ. ຂັ້ນຕອນດຳເນີນກິດຈະກຳສາວໄໝ

- ການເລືອກຮັງຫລອກ: ຮັງຫລອກດີ, ແຝດ, ດ້ານ, ຜິດຮູບປະພັນ, ບາງ, ເປື້ອນນອກເປື້ອນໃນໃຫ້ແຍກສາວຄົນລະຢ່າງ.

- ຂະໜາດຂອງເສັ້ນໄໝ (ກຳນົດຮັງຫລອກໃນໝໍ້ສາວ).ການສາວໄໝອີງຕາມສະພາບຄວາມຕ້ອງການຂອງຜູ້ຊົມໃຊ້ (ຕະຫລາດ) ຫລື ສາວຕາມວຽກຕົວຈິງທີ່ຕົນເອງຈະໃຊ້ນ້ອຍສຸດຈະເລີ່ມຈາກ 8 -10 ຮັງຫລອກ ຫລື ຕາມລູກຄ້າສັ່ງ.

ຄ. <u>ການຕົ້ມຮັງຫລອກ</u>

- ການຕົ້ມຮັງຫລອກແມ່ນອີງໃສ່ປະເພດຂອງຮັງຫລອກ.
- ຮັງຫລອກດີທຳມະດາຕົ້ມໃນອຸນະພູມ 70-80°c
- ຮັງແຝດຕົ້ມໃນອຸນະພູມ 80-90°c
- ຮັງຫລອກອົບແຫ້ງຕົ້ມໃນອຸນະພູມ 90-100°c
- ຖ້ານ້ຳໃນໝໍ້ຕົ້ມຫາກເຢັນກ່ອນກຳນົດສາວໄໝຈະບໍ່ອອກ, ຖ້ານ້ຳໃນໝໍ້ຮ້ອນເກີນກຳນົດຮັງຫລອກໃນໝໍ້ຈະເປື່ອຍ.

ງ. <u>ການຫາວເງື່ອນໄໝ</u>

- ການຫາວເງື່ອນໄໝແມ່ນການຈັບສົ້ນ ຫລື ເງື່ອນໄໝໃນຮັງຫລອກໂດຍໃຊ້ອຸປະກອນໄມ້ຄີບເພື່ອຊີດເອົາເງື່ອນຕາມຄວາມຕ້ອງການ (ການຈັບສົ້ນໄໝລະໜ່ຳລະເໝີຈະໄດ້ເສັ້ນໄໝເລີ່ງງາມ).

ຈ. <u>ການສາວໄໝ</u>

ມີສອງວິທີຄື: ວິທີທີ່ 1 ສາວແຕ່ຕົ້ນໄປເລີຍໂດຍບໍ່ໄດ້ແຍກໄໝເປືອກ ວິທີທີ່ 2 ສາວໄໝເປືອກອອກກ່ອນແລ້ວຈຶ່ງສາວໄໝຕໍ່ໆໄປຈົນໝົດ.

ສ. <u>ການຮັກສາສີຂອງເສັ້ນໄໝ</u>

- ແຍກຮັງຫລອກມ້ອນຕາຍອອກ, ປ່ຽນນ້ຳໃນໝໍ້ສາວໄໝຖ້າເຫັນວ່ານ້ຳໃນໝໍ້ດຳ.

ຊ. <u>ການສາວໄໝເປືອກນອກ</u>

- ເປັນການຍົກຄຸນນະພາບເສັ້ນໄໝແບບກິດຈະກຳມີການສາວໄໝຍອດ (ແມ່ນການແຍກເສັ້ນໄໝທີ່ບໍ່ງາມອອກຕ່າງຫາກ).

ຍ. <u>ການສາວໄໝຍອດ</u>

- ໄໝຍອດແມ່ນເສັ້ນໄໝທີ່ຢູ່ທາງກາງຂອງຮັງຫລອກເສັ້ນເລີ່ງງາມຕະຫລາດນິຍົມໄດ້ລາຄາດີ. ການເຮັດປອຍໄໝຕ້ອງເອົາໃຈໃສ່ຄວບຄຸມຂະໜາດ ແລະ ລວງຮອບ, ນ້ຳໜັກບໍ່ເກີນ 100 g /1 ປອຍລວງຮອບ 1.33 ມ, ມັດໄໝ 3 ບ່ອນ (ບໍ່ຄວນໃຊ້ຝ້າຍທີ່ມີສີມັດໃນໄໝ).

## 13. ການເກັບ<u>ຮັກສາແມ່ພັນມ້ອນເພື່ອລ້ຽງຮຸ່ນຕໍ່ໄປ</u>

- ດີທີ່ສຸດມ້ອນກະດົ້ງໃດທີ່ຈະລ້ຽງເຮັດແນວພັນຕ້ອງແຍກດູແລເປັນພິເສດ.
- ເລືອກຕົວຜູ້ ແລະ ຕົວແມ່ໄວ້ລະເໝີກັນໃຫ້ພໍດີກັບແຜນການທີ່ຈະລ້ຽງ.
- ແຍກຕົວຜູ້,ແມ່ໄວ້ຄົນລະບ່ອນຮັກສາບໍ່ໃຫ້ມົດກັດໜູກິນ.